

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະໂຍບາຍແຫ່ງຊາດ

ວ່າດ້ວຍ

ການປະຢັດ ແລະ ອານຸລັກພະລັງງານ

ນະຄອນຫຼວງວຽງຈັນ 2016

ສາລະບານ

ພາກທີ 1 ພາກສະເໜີ 1

1. ຈຸດປະສົງ 3
2. ເປົ້າໝາຍ 3
3. ຜົນປະໂຫຍດ ຂອງການປະຢັດ ແລະ ອານຸລັກພະລັງງານ 3

ພາກທີ 2 ເນື້ອໃນຂອງນະໂຍບາຍການປະຢັດ ແລະ ອານຸລັກພະລັງງານ 4

1. ຂອບເຂດການນຳໃຊ້ 4
2. ນະໂຍບາຍໃນການປະຢັດ ແລະ ອານຸລັກພະລັງງານ 4
3. ນະໂຍບາຍຕໍ່ຜູ້ປະກອບການ 6
4. ແຫຼ່ງທຶນສຳລັບການປະຢັດ ແລະ ອານຸລັກພະລັງງານ 6

ພາກທີ 3 ແນວທາງການຈັດຕັ້ງປະຕິບັດ 6

1. ອົງການຄຸ້ມຄອງ 6
2. ແຜນການຈັດຕັ້ງປະຕິບັດ: 6
3. ວິທີການຈັດຕັ້ງປະຕິບັດ 7

ພາກທີ 4 ການຕິດຕາມ-ກວດກາການປະຕິບັດ 8

ພາກທີ 1 ພາກສະເໜີ

ສປປ ລາວ ອຸດົມສົມບູນໄປດ້ວຍຊັບພະຍາກອນທຳມະຊາດ ທີ່ເປັນທ່າແຮງໃຫ້ແກ່ການຜະລິດພະລັງງານ ຮັບໃຊ້ພາຍໃນ ແລະ ສົ່ງອອກຂາຍຕ່າງປະເທດ ເພື່ອສ້າງເປັນລາຍຮັບແຫ່ງຊາດ. ພ້ອມດຽວກັນນັ້ນ, ກໍຍັງມີຄວາມຈຳເປັນໄດ້ນຳເຂົ້າໄຟຟ້າ ແລະ ພະລັງງານປະເພດອື່ນໆເປັນຈຳນວນໜຶ່ງໃນແຕ່ລະປີ ເພື່ອຕອບສະໜອງກັບຄວາມຕ້ອງການ ໃນການພັດທະນາເສດຖະກິດ ແລະ ສັງຄົມແຫ່ງຊາດ ໃຫ້ມີການຂະຫຍາຍໂຕຕາມເປົ້າໝາຍຂອງລັດຖະບານ. ເມື່ອເສດຖະກິດ-ສັງຄົມຂອງປະເທດມີການຂະຫຍາຍໂຕໃນລະດັບສູງຂຶ້ນ ບັນດາຂະແໜງການເສດຖະກິດ-ສັງຄົມກໍມີຄວາມຕ້ອງການດ້ານພະລັງງານເພີ່ມຂຶ້ນ ເປັນຕົ້ນ ໄລຍະ 1990 – 2014, ການນຳໃຊ້ພະລັງງານ ຂອງ ສປປລາວ ເພີ່ມຂຶ້ນສະເລ່ຍປະມານ 3.5% ຕໍ່ປີ ເທົ່າກັບ 2,510 ກິໂລໂຕນນ້ຳມັນທຽບເທົ່າ ຂອງປີ 2014, ປະກອບມີໄມ້ຟືນກວມສ່ວນແບ່ງ 49.1%, ນ້ຳມັນ 32.7%, ໄຟຟ້າ 12.6%, ຖ່ານໄມ້ 5.4% ແລະ ຖ່ານຫີນ 0.2%. ຄາດຄະເນວ່າ ໃນປີ 2030 ສປປ ລາວ ຈະຕ້ອງການໃຊ້ພະລັງງານ ປະມານ 4,320 ກິໂລໂຕນນ້ຳມັນທຽບເທົ່າ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງການຂະຫຍາຍໂຕດ້ານເສດຖະກິດ-ສັງຄົມແຫ່ງຊາດ.

ສະພາບລວມ ຂອງການຊົມໃຊ້ພະລັງງານແຕ່ລະປະເພດ ໄລຍະ 1990-2014 ມີດັ່ງລຸ່ມນີ້:

ໄຟຟ້າ: ການຊົມໃຊ້ໄຟຟ້າ ເພີ່ມຂຶ້ນສະເລ່ຍປະມານ 14% ຕໍ່ປີ ເທົ່າກັບ 3,791 ກິກາວັດໂມງ ແລະ ຄວາມຕ້ອງການກຳລັງໄຟຟ້າ ປະມານ 744 ເມກາວັດ ໃນປີ 2014, ຊຶ່ງອັດຕາສ່ວນແບ່ງ ຂອງການນຳໃຊ້ພະລັງງານໄຟຟ້າເທົ່າກັບ 12.6% ຂອງການຊົມໃຊ້ພະລັງງານທັງໝົດ. ໃນປີ 2014, ການຊົມໃຊ້ພະລັງງານໄຟຟ້າໃນພາກອຸດສາຫະກຳກວມ 41.2% ຂອງການຊົມໃຊ້ພະລັງງານໄຟຟ້າທັງໝົດ, ພາກທີ່ຢູ່ອາໄສ 37.6%, ພາກທຸລະກິດ 14.3%, ສຳນັກງານຂອງລັດ 5.4%, ພາກກະສິກຳ 0.9%, ບັນເທີງ 0.3% ແລະ ອົງການຈັດຕັ້ງສາກົນ 0.3%. ຈຳນວນຄອບຄົວທີ່ມີໄຟຟ້າໃຊ້ທົ່ວປະເທດ 88% ໃນປີ 2015. ປັດຈຸບັນ ສປປ ລາວ ມີແຫຼ່ງຜະລິດພະລັງງານໄຟຟ້າທັງໝົດ 36 ແຫ່ງ, ຊຶ່ງປະກອບມີເຂື່ອນໄຟຟ້ານ້ຳຕົກ 33 ແຫ່ງ (ບໍ່ນັບເຂື່ອນຂະໜາດນ້ອຍ ທີ່ມີກຳລັງຕິດຕັ້ງຕ່ຳກວ່າ 1 ເມກາວັດ), ໂຮງງານໄຟຟ້າຄວາມຮ້ອນ ຈາກຖ່ານຫີນ 1 ແຫ່ງ ແລະ ໂຮງງານໄຟຟ້າຄວາມຮ້ອນ ຈາກເຫຍື່ອອ້ອຍ 2 ແຫ່ງ, ຊຶ່ງມີກຳລັງຕິດຕັ້ງລວມກັນທັງໝົດ 6,264.8 ເມກາວັດ ແລະ ສາມາດຜະລິດພະລັງງານໄຟຟ້າໄດ້ 33,315 ກິກາວັດໂມງ/ປີ. ຄາດຄະເນວ່າຄວາມຕ້ອງການກຳລັງຕິດຕັ້ງໄຟຟ້າ ທີ່ຊົມໃຊ້ພາຍໃນປະເທດຈະເພີ່ມຂຶ້ນເປັນ 7,093 ເມກາວັດ ໃນປີ 2030. ຈາກສະຖິຕິການຊົມໃຊ້ພະລັງງານໄຟຟ້າໃນໄລຍະຜ່ານມາສັງເກດເຫັນວ່າ ການຈຳໜ່າຍພາຍໃນປະເທດ ແລະ ການນຳເຂົ້າ ແມ່ນເພີ່ມຂຶ້ນແບບຄອບຄູ່ຂະໜານກັນ ຍ້ອນສາຍເຫດ ຄື: (1) ການຜະລິດພະລັງງານໄຟຟ້າ ໃນປະເທດ ຕົ້ນຕໍ ແມ່ນມາຈາກແຫຼ່ງພະລັງງານໄຟຟ້ານ້ຳຕົກ, ຊຶ່ງປະລິມານນ້ຳມີໜ້ອຍໃນລະດູແລ້ງ ແລະ ບໍ່ສາມາດຜະລິດພະລັງງານໄຟຟ້າໄດ້ເຕັມກຳລັງຕິດຕັ້ງ; (2) ຄວາມຕ້ອງການພະລັງງານໄຟຟ້າພາຍໃນປະເທດເພີ່ມຂຶ້ນໄວ ແລະ ເຮັດໃຫ້ການຜະລິດພະລັງງານໄຟຟ້າ ພາຍໃນປະເທດ ບໍ່ສາມາດຕອບສະໜອງຢ່າງພຽງພໍຕາມຄວາມຕ້ອງການ; (3) ບາງເຂດທີ່ຕິດຊາຍແດນຫ່າງໄກຍັງຕ້ອງໄດ້ນຳເຂົ້າໄຟຟ້າຈາກປະເທດເພື່ອນບ້ານຍ້ອນລະບົບຕາຂ່າຍໄຟຟ້າແຫ່ງຊາດຍັງບໍ່ທັນເຊື່ອມຕໍ່ທົ່ວປະເທດ.

ນ້ຳມັນເຊື້ອໄຟ: ອີງຕາມຂໍ້ມູນການນຳເຂົ້ານ້ຳມັນ ສັງເກດເຫັນວ່າ ໄລຍະ 1990-2014, ຄວາມຕ້ອງການນ້ຳມັນເຊື້ອໄຟໄດ້ເພີ່ມຂຶ້ນສະເລ່ຍ 6.5% ຕໍ່ປີ ຊຶ່ງອັດຕາສ່ວນແບ່ງ ຂອງການນຳໃຊ້ນ້ຳມັນເຊື້ອໄຟກວມ 32.7% ຂອງການຊົມໃຊ້ພະລັງງານທັງໝົດ. ໃນປີ 2014 ການນຳເຂົ້ານ້ຳມັນສູງເຖິງ 1,192 ລ້ານລິດ, ຊຶ່ງໃນນັ້ນນ້ຳມັນກາຊອນ 78%, ແອັດຊັງ 18.6%, ນ້ຳມັນຍີນ 2.2% ແລະ ນ້ຳມັນເຕົາ 1.2%, ຊຶ່ງ ພາກຂົນສົ່ງນຳໃຊ້ນ້ຳມັນເຊື້ອໄຟ 96.3%, ພາກກະສິກຳ 2.6% ແລະ ພາກອຸດສາຫະກຳ 1.1%.

ຖ່ານຫີນ: ໄລຍະປີ 1997-2014, ການຊົມໃຊ້ພະລັງງານຈາກຖ່ານຫີນ ເພີ່ມຂຶ້ນດ້ວຍອັດຕາສ່ວນສະເລ່ຍ 9.8% ຕໍ່ປີ ຊຶ່ງກວມອັດຕາສ່ວນແບ່ງການຊົມໃຊ້ພະລັງງານທັງໝົດ 8% ໃນປີ 2014. ພາກອຸດສາຫະກຳ ເປັນຂະແໜງການທີ່ນຳໃຊ້ຖ່ານຫີນຕົ້ນຕໍ 100%. ການຂຸດຄົ້ນຖ່ານຫີນຕົວຈິງລວມທັງໝົດ 312,000 ໂຕນ, ຊຶ່ງໃນນັ້ນປະກອບມີ ແອນຫຼາໄຊ 50,000 ໂຕນ ແລະ ສັບບິຕູມິນາສ 262,000 ໂຕນ. ຄາດຄະເນວ່າ ຄວາມຕ້ອງການຂຸດຄົ້ນຖ່ານຫີນຈະເພີ່ມຂຶ້ນ ເປັນ 21 ລ້ານ ໂຕນ/ປີ ໃນປີ 2020, ລວມມີແອນຫຼາໄຊ ປະມານ 2 ລ້ານ ໂຕນ/ປີ ແລະ ສັບບິຕູມິນາສ ປະມານ 19 ລ້ານ ໂຕນ/ປີ.

ຊີວະມວນ: ໄລຍະປີ 1990-2014, ການຊົມໃຊ້ພະລັງງານຊີວະມວນ ຈາກໄມ້ຟືນເພີ່ມຂຶ້ນດ້ວຍອັດຕາສ່ວນ 1.5% ແລະ ຖ່ານໄມ້ 3.7%. ພະລັງງານຊີວະມວນກວມອັດຕາສ່ວນແບ່ງ 54.5% ຂອງການຊົມໃຊ້ພະລັງງານທັງໝົດ ໃນປີ 2014, ຊຶ່ງພາກທີ່ຢູ່ອາໄສ ໃຊ້ໄມ້ຟືນ 81.2%, ພາກທຸລະກິດ 14.5% ແລະ ອຸດສາຫະກຳ 4.3%. ສ່ວນການນຳໃຊ້ຖ່ານໄມ້ ໃນພາກທຸລະກິດ 51.3% ແລະ ພາກຄົວເຮືອນ 48.7%.

ສະພາບລວມ ຂອງການຊົມໃຊ້ພະລັງງານ ແບ່ງຕາມປະເພດຜູ້ຊົມໃຊ້ ໄລຍະປີ 1990-2014 ມີດັ່ງລຸ່ມນີ້:

ທີ່ຢູ່ອາໄສ: ການຊົມໃຊ້ພະລັງງານ ເພີ່ມຂຶ້ນສະເລ່ຍ 2% ຕໍ່ປີ ແລະ ກວມອັດຕາສ່ວນແບ່ງ 47.4% ຂອງການຊົມໃຊ້ພະລັງງານທັງໝົດ ໃນປີ 2014 ແລະ ສັງເກດເຫັນວ່າມີທ່າອ່ຽງຫຼຸດລົງ.

ການຂົນສົ່ງ: ການຊົມໃຊ້ພະລັງງານ ເພີ່ມຂຶ້ນສະເລ່ຍ 6.3% ຕໍ່ປີ ຊຶ່ງກວມອັດຕາສ່ວນແບ່ງ 31.3% ຂອງການຊົມໃຊ້ພະລັງງານທັງໝົດ ໃນປີ 2014 ແລະ ສັງເກດເຫັນວ່າມີທ່າອ່ຽງເພີ່ມຂຶ້ນ.

ທຸລະກິດ: ການຊົມໃຊ້ພະລັງງານ ເພີ່ມຂຶ້ນສະເລ່ຍ 2.8% ຕໍ່ປີ, ກວມອັດຕາສ່ວນແບ່ງ 12.3% ຂອງການຊົມໃຊ້ພະລັງງານທັງໝົດ ໃນປີ 2014 ແລະ ສັງເກດເຫັນວ່າມີການປ່ຽນແປງໜ້ອຍ.

ອຸດສາຫະກຳ: ການຊົມໃຊ້ພະລັງງານ ເພີ່ມຂຶ້ນສະເລ່ຍ 7.1% ຕໍ່ປີ, ອັດຕາສ່ວນແບ່ງການຊົມໃຊ້ພະລັງງານເພີ່ມຂຶ້ນ 3.5% ປີ 1990 ເປັນ 8.0% ໃນປີ 2014 ຂອງປະລິມານການຊົມໃຊ້ພະລັງງານທັງໝົດ.

ກະສິກຳ: ການຊົມໃຊ້ພະລັງງານ ເພີ່ມຂຶ້ນສະເລ່ຍ 14.3% ຕໍ່ປີ, ເຮັດໃຫ້ອັດຕາສ່ວນແບ່ງໃນການຊົມໃຊ້ພະລັງງານທັງໝົດເພີ່ມຂຶ້ນຈາກ 0.2% ໃນປີ 1990 ເປັນ 1% ໃນປີ 2014.

ພະລັງງານ ເປັນປັດໃຈພື້ນຖານອັນສຳຄັນ ຂອງປະຊາກອນໂລກ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການ ໃນການພັດທະນາ ດ້ານເສດຖະກິດ-ສັງຄົມ. ການເພີ່ມຂຶ້ນຂອງປະຊາກອນ ແລະ ການຂະຫຍາຍຕົວດ້ານເສດຖະກິດ ເຮັດໃຫ້ມີການນຳໃຊ້ພະລັງງານນັບມື້ນັບເພີ່ມຂຶ້ນ ພ້ອມທັງມີການປົກແຫ້ງພະລັງງານຟອດຊິວ ແລະ ເປັນສາຍເຫດເຮັດໃຫ້ມີການປ່ຽນແປງດິນຟ້າອາກາດ ຈາກການນຳໃຊ້ພະລັງງານ. ສະນັ້ນ, ບັນດາປະເທດໃນໂລກ ໄດ້ຫັນມາປັບປ່ຽນນະໂຍບາຍ ຂອງຕົນ ໂດຍເນັ້ນໃສ່ການປະຢັດ ແລະ ອານຸລັກພະລັງງານ ພ້ອມທັງຊອກຫາແຫຼ່ງພະລັງງານທົດແທນ ແລະ ເປັນມິດກັບສິ່ງແວດລ້ອມ. ຈາກທ່າອ່ຽງດັ່ງກ່າວ ປະເທດເຮົາ ຄວນຕ້ອງເອົາໃຈໃສ່ວຽກງານການປະຢັດ ແລະ ອານຸລັກພະລັງງານໃຫ້ໜັກແໜ້ນຂຶ້ນ ບົນພື້ນຖານການວາງນະໂຍບາຍເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງ ແລະ ສົ່ງເສີມການອານຸລັກ ແລະ ປະຢັດພະລັງງານໃຫ້ເປັນຮູບປະທຳ.

1. ຈຸດປະສົງ

ນະໂຍບາຍສະບັບນີ້ ກຳນົດຫຼັກການລວມ ແລະ ມາດຕະການໃນການຄຸ້ມຄອງ ແລະ ສົ່ງເສີມການປະຢັດ ແລະ ອານຸລັກພະລັງງານໃຫ້ເປັນຮູບປະທຳ, ມີປະສິດທິພາບ, ມີປະສິດທິຜົນ ຕາມທິດຍືນຍົງທີ່ຕິດພັນກັບສິ່ງແວດລ້ອມ, ປະກອບສ່ວນສ້າງສະຖຽນລະພາບ ແລະ ຄວາມຄ່ອງໂຕ ໃນການສະໜອງພະລັງງານເພື່ອສະສົມທຶນຮອນ ແລະ ຮັບປະກັນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ.

ເພື່ອຊຸກຍູ້, ສົ່ງເສີມ ແລະ ປຸກຈິດສຳນຶກປະຊາຊົນບັນດາເຜົ່າ, ທຸກຊັ້ນຄົນໃນຊາດໃຫ້ມີສະຕິຕື່ນຕົວ ແລະ ເປັນເຈົ້າການປະກອບສ່ວນເຂົ້າໃນການປະຢັດ ແລະ ອານຸລັກພະລັງງານ ເພື່ອສະສົມທຶນຮອນໄວ້ພັດທະນາຄອບຄົວ ແລະ ປະເທດຊາດ.

ເພື່ອສະເໜີວຽກງານການປະຢັດ ແລະ ອານຸລັກພະລັງງານເຂົ້າໃນອາລະຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ.

2. ເປົ້າໝາຍ

ນະໂຍບາຍສະບັບນີ້ ແນໃສ່ຫຼຸດຜ່ອນການນຳໃຊ້ພະລັງງານຂອງ ສປປ ລາວ ລົງ 10% ໃນປີ 2030 ຕາມຈັງວະການຂະຫຍາຍຕົວຂອງເສດຖະກິດ

3. ຜົນປະໂຫຍດ ຂອງການປະຢັດ ແລະ ອານຸລັກພະລັງງານ

ການປະຢັດ ແລະ ອານຸລັກພະລັງງານ ມີຜົນປະໂຫຍດດັ່ງລຸ່ມນີ້:

ກ. ຜົນປະໂຫຍດດ້ານເສດຖະກິດ-ສັງຄົມ

ການປະຢັດ ແລະ ອານຸລັກພະລັງງານ ໝາຍຄວາມວ່າ ຈະຕ້ອງນຳໃຊ້ພະລັງງານຢ່າງມີຫຼັກການ ແລະ ກໍ່ໃຫ້ເກີດປະໂຫຍດສູງສຸດ, ມີປະສິດທິພາບ ແລະ ປະສິດທິຜົນ ຈະຊ່ວຍຫຼຸດຜ່ອນຄ່າໃຊ້ຈ່າຍ ດ້ານພະລັງງານເພື່ອປະກອບສ່ວນຊ່ວຍຫຼຸດຜ່ອນຕົ້ນທຶນ ແລະ ເພີ່ມຂີດຄວາມສາມາດໃນການແຂ່ງຂັນ ໃຫ້ແກ່ຜະລິດຕະພັນຂອງ ສປປ ລາວ ໃນເວທີຕະຫຼາດການສົ່ງອອກ ລວມທັງການບໍລິໂພກຢູ່ພາຍໃນປະເທດ. ພ້ອມກັນນັ້ນ ຍັງຊ່ວຍ

ຫຼຸດຜ່ອນການນຳເຂົ້າພະລັງງານປະເພດຕ່າງໆ ແລະ ການຮົ່ວໄຫຼຂອງເງິນຕາອອກຕ່າງປະເທດ, ສົ່ງເສີມ ແລະ ຊຸກຍູ້ການລົງທຶນຂອງພາກເອກະຊົນ, ສ້າງໂອກາດມີວຽກເຮັດງານທຳເພີ່ມຂຶ້ນ, ຫຼຸດຜ່ອນການລົງທຶນ ໃສ່ການ ຜະລິດແຫຼ່ງພະລັງງານ ຊຶ່ງຈະເຮັດໃຫ້ມີທຶນຮອນປະກອບສ່ວນໃນການພັດທະນາເສດຖະກິດ-ສັງຄົມໂດຍ ລວມ.

ຂ. ຜົນປະໂຫຍດດ້ານສິ່ງແວດລ້ອມ:

ການປະຢັດ ແລະ ອະນຸລັກພະລັງງານ ຈະຊ່ວຍປະກອບສ່ວນເຂົ້າໃນການບັນເທົາສະພາບເຊື່ອມໂຊມ ດ້ານສິ່ງແວດລ້ອມ ຍ້ອນວ່າການຊົມໃຊ້ພະລັງງານໜ້ອຍລົງຈະເຮັດໃຫ້ຫຼຸດຜ່ອນການຜະລິດພະລັງງານ ແລະ ຫຼຸດຜ່ອນການປ່ອຍມົນລະພິດຕ່າງໆ ໂດຍສະເພາະ ແມ່ນທາດອາຍພິດເຮືອນແກ້ວທີ່ເປັນຕົ້ນເຫດຂອງການປ່ຽນ ແປງດິນຟ້າອາກາດ ແລະ ສາມາດສ້າງລາຍຮັບເພີ່ມຈາກການແລກປ່ຽນ ສິນເຊື່ອກາຣບອນໃນຕະຫຼາດສາກົນ, ສາມາດຍືດອາຍຸການໃຊ້ພະລັງງານໃຫ້ຍາວນານ ແລະ ຍືນຍົງ.

ລັດສົ່ງເສີມວຽກງານການປະຢັດ ແລະ ອະນຸລັກພະລັງງານໃຫ້ສາມາດເຂົ້າເຖິງການແລກປ່ຽນ ສິນເຊື່ອ ກາຣບອນໃນຕະຫຼາດສາກົນ ໂດຍຜ່ານກົນໄກ ທີ່ລັດຖະບານ ສປປ ລາວ ໄດ້ມີຂໍ້ຕົກລົງ ແລະ ສົນທິສັນຍາຮ່ວມ ເປັນພາຄີ.

ພາກທີ 2 ເນື້ອໃນຂອງນະໂຍບາຍການປະຢັດ ແລະ ອະນຸລັກພະລັງງານ

1. ຂອບເຂດການນຳໃຊ້

ນະໂຍບາຍສະບັບນີ້ ນຳໃຊ້ໄດ້ທຸກຊັ້ນຄົນໃນສັງຄົມ ເຊັ່ນ: ອົງການຈັດຕັ້ງຂອງພັກ-ລັດ ຂັ້ນສູນກາງ ແລະ ທ້ອງຖິ່ນ, ວິສາຫະກິດລັດ, ບັນດາໂຮງຈັກໂຮງງານເອກະຊົນ ແລະ ປະຊາຊົນບັນດາເຜົ່າໃນຂອບເຂດທົ່ວ ປະເທດ.

2. ນະໂຍບາຍໃນການປະຢັດ ແລະ ອະນຸລັກພະລັງງານ

ນະໂຍບາຍສະບັບນີ້ ກວມເອົາບັນດາຂະແໜງການ ຄື: ພາກອຸດສາຫະກຳ, ພາກທີ່ຢູ່ອາໄສ, ພາກຕຶກ-ອາຄານທຸລະກິດ ແລະ ສຳນັກງານ ແລະ ພາກການຂົນສົ່ງ.

ກ. ພາກອຸດສາຫະກຳ

ການປະຢັດ ແລະ ອະນຸລັກພະລັງງານໃນພາກອຸດສາຫະກຳ ແມ່ນແນໃສ່ສົ່ງເສີມການນຳໃຊ້ອຸປະກອນ, ເຄື່ອງຈັກ ຫຼື ລະບົບການຜະລິດທີ່ປະຢັດພະລັງງານ ເພື່ອໃຫ້ສອດຄ່ອງກັບມາດຕະຖານສະມັດຕະພາບດ້ານ ພະລັງງານຕ່ຳສຸດ, ໂດຍສະເພາະປະເພດມໍເຕີ ແລະ ອຸປະກອນເຄື່ອງໃຊ້ພະລັງງານອື່ນໆ. ພ້ອມທັງປັບປຸງລະບົບ ການບໍລິຫານ-ຄຸ້ມຄອງພະລັງງານໃນໂຮງຈັກ-ໂຮງງານ, ສົ່ງເສີມການບໍລິການດ້ານພະລັງງານໃຫ້ແກ່ພາກ ອຸດສາຫະກຳຂະໜາດກາງ ແລະ ນ້ອຍ ໂດຍຫັນອອກຈາກການເກື້ອກູນຄ່າໃຊ້ຈ່າຍດ້ານພະລັງງານ, ກຸ້ມຕົນເອງ ດ້ານພະລັງງານ ແລະ ໃນໄລຍະຍາວໃຫ້ຫັນໄປສູ່ການແລກປ່ຽນ ສິນເຊື່ອກາຣບອນໃນຕະຫຼາດສາກົນ.

ເພື່ອກະຕຸກຊຸກຍູ້ໃຫ້ມີການປະຢັດ ແລະ ອານຸລັກພະລັງງານໃນພາກອຸດສາຫະກຳ ຕ້ອງປະຕິບັດບັນດານະໂຍບາຍ ເຊັ່ນ: ຍ້ອງຍໍສັນລະເສີນຕໍ່ຜູ້ທີ່ປະຕິບັດລະບຽບຫຼັກການ ແລະ ປະຕິບັດວິໄນຕໍ່ຜູ້ລະເມີດ, ສົ່ງເສີມການລົງທຶນໃສ່ອຸປະກອນ, ເຄື່ອງຈັກ ຫຼື ລະບົບການຜະລິດທີ່ມີປະສິທິພາບສູງ ດ້ານພະລັງງານ ໂດຍໃຫ້ສົ່ງຈູງໃຈຕາມຄວາມເໝາະສົມ.

ຂ. ພາກທີ່ຢູ່ອາໄສ

ກຳນົດມາດຕະຖານສະມັດຕະພາບດ້ານພະລັງງານຕ່ຳສຸດ ສຳລັບບັນດາອຸປະກອນ-ເຄື່ອງໃຊ້ພະລັງງານໃນຄົວເຮືອນ, ສ້າງລະບຽບການ, ຂໍ້ກຳນົດ ແລະ ກົນໄກການທົດສອບຄຸນະພາບ ຂອງບັນດາເຄື່ອງໃຊ້ດັ່ງກ່າວ. ຕິດກາໝາຍປະຢັດພະລັງງານ ສຳລັບເຄື່ອງໃຊ້ພະລັງງານ ແລະ ຄຸ້ມຄອງການນຳເຂົ້າ, ສົ່ງເສີມການນຳໃຊ້ອຸປະກອນເຄື່ອງໃຊ້ທີ່ປະຢັດພະລັງງານ ໂດຍໃຫ້ສົ່ງຈູງໃຈຕາມຄວາມເໝາະສົມ ພ້ອມທັງໃຫ້ບໍລິການດ້ານເຕັກນິກ, ດຳເນີນການຕິດຕາມ-ກວດກາການຈຳໜ່າຍ ແລະ ນຳໃຊ້ບັນດາອຸປະກອນ-ເຄື່ອງໃຊ້ພະລັງງານໃຫ້ສອດຄ່ອງກັບມາດຕະຖານທີ່ໄດ້ກຳນົດໄວ້.

ສົ່ງເສີມການກໍ່ສ້າງອາຄານ-ເຮືອນຢູ່ອາໄສທີ່ປະຢັດພະລັງງານ ໂດຍໃຫ້ສອດຄ່ອງກັບຂໍ້ກຳນົດດ້ານພະລັງງານຂອງອາຄານ ແລະ ນຳໃຊ້ແຫຼ່ງພະລັງງານທຳມະຊາດຕາມຄວາມເໝາະສົມ.

ຄ. ພາກຕຶກ-ອາຄານທຸລະກິດ ແລະ ສຳນັກງານ

ເກັບກຳ ແລະ ສ້າງຖານຂໍ້ມູນກ່ຽວກັບຕຶກ-ອາຄານທຸລະກິດ ແລະ ສຳນັກງານທີ່ມີແລ້ວ, ລວມທັງທີ່ຈະມີແຜນປັບປຸງ ແລະ ສ້າງໃໝ່. ກຳນົດມາດຕະຖານສະມັດຕະພາບດ້ານພະລັງງານຕ່ຳສຸດສຳລັບຕຶກ-ອາຄານທຸລະກິດ ແລະ ສຳນັກງານ, ສ້າງຂໍ້ກຳນົດດ້ານພະລັງງານ ສຳລັບຕຶກ-ອາຄານທຸລະກິດ ແລະ ສຳນັກງານ.

ສົ່ງເສີມການອອກແບບ ແລະ ປັບປຸງບັນດາຕຶກ-ອາຄານທຸລະກິດ ແລະ ສຳນັກງານໃຫ້ມີການປະຢັດພະລັງງານ ໂດຍໃຫ້ສົ່ງຈູງໃຈຕາມຄວາມເໝາະສົມ, ພ້ອມທັງ ເຜີຍແຜ່ຂໍ້ມູນຂ່າວສານ ກ່ຽວກັບວັດສະດຸກໍ່ສ້າງ ແລະ ເຕັກໂນໂລຊີໃໝ່ທີ່ປະຢັດພະລັງງານ.

ງ. ພາກການຂົນສົ່ງ

ນຳໃຊ້ມາດຕະຖານນ້ຳມັນເຊື້ອໄຟ, ກວດສອບຄຸນະພາບນ້ຳມັນ, ສົ່ງເສີມການນຳໃຊ້ພາຫະນະທີ່ມີການປະຢັດ ແລະ ອານຸລັກພະລັງງານ ໂດຍໃຫ້ສົ່ງຈູງໃຈຕາມຄວາມເໝາະສົມ.

ສົ່ງເສີມຄຸນະພາບໃນການຂັບຂີ່ ໂດຍເນັ້ນໃສ່ການປັບປຸງຄຸນະພາບຂອງໂຮງຮຽນສອນການຂັບຂີ່, ການຝຶກອົບຮົມ, ການໂຄສະນາ, ການປຸກຈິດສຳນຶກກ່ຽວກັບລະບຽບ ແລະ ມາລະຍາດໃນການຂັບຂີ່.

ສ້າງ ແລະ ປັບປຸງປະສິດທິພາບ ຂອງລະບົບການຂົນສົ່ງໂດຍນຳໃຊ້ລະບົບຄວບຄຸມການສັນຈອນທີ່ມີປະສິດທິຜົນສູງ, ປັບປຸງພື້ນຖານໂຄງລ່າງສຳລັບການຂົນສົ່ງ, ຍົກລະດັບຄຸນະພາບ ແລະ ເຂັ້ມງວດໃນການກວດກາເຕັກນິກຂອງຍານພາຫະນະເປັນຕົ້ນແມ່ນລົດເມສອງ.

ສົ່ງເສີມ ແລະ ພັດທະນາທາງເລືອກໃນການຂົນສົ່ງ ເຊັ່ນ: ນຳໃຊ້ນ້ຳມັນເຊື້ອໄຟຊີວະພາບ, ນຳໃຊ້ລົດໄຟຟ້າ, ລະບົບຂົນສົ່ງສາທາລະນະ ແລະ ອື່ນໆ.

3. ນະໂຍບາຍຕໍ່ຜູ້ປະກອບການ

ລັດຊຸກຍູ້, ສົ່ງເສີມການລົງທຶນພາຍໃນ ແລະ ຕ່າງປະເທດ ໃສ່ວຽກງານການປະຢັດ ແລະ ອະນຸລັກພະລັງງານ ແລະ ຜູ້ປະກອບການມີສິດໄດ້ຮັບນະໂຍບາຍສະໜັບສະໜຸນ ແລະ ຜົນຕອບແທນ ອັນເໝາະສົມ ເຊັ່ນ: ການເຂົ້າເຖິງແຫຼ່ງຂໍ້ມູນຂ່າວສານ, ແຫຼ່ງທຶນ ແລະ ອື່ນໆ ທີ່ສອດຄ່ອງຕາມກົດໝາຍ ຂອງ ສປປ ລາວ.

4. ແຫຼ່ງທຶນສຳລັບການປະຢັດ ແລະ ອະນຸລັກພະລັງງານ

ງົບປະມານສະໜັບສະໜຸນວຽກງານການປະຢັດ ແລະ ອະນຸລັກພະລັງງານ ແມ່ນມາຈາກແຫຼ່ງທຶນຕ່າງໆ ເຊັ່ນ: ງົບປະມານຂອງລັດ, ກອງທຶນພັດທະນາໄຟຟ້າທ້ອງຖິ່ນ ແລະ ຊຸມນະບົດ (ຈະປັບປຸງເປັນກອງທຶນພັດທະນາພະລັງງານ), ການຊ່ວຍເຫຼືອຈາກອົງການຈັດຕັ້ງສາກົນ ແລະ ແຫຼ່ງທຶນອື່ນໆທີ່ເປັນໄປໄດ້.

ພາກທີ 3 ແນວທາງການຈັດຕັ້ງປະຕິບັດ

1. ອົງການຄຸ້ມຄອງ

ລັດຄຸ້ມຄອງວຽກງານສົ່ງເສີມການປະຢັດ ແລະ ອະນຸລັກພະລັງງານ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງພະລັງງານ ແລະ ບໍ່ແຮ່ ເປັນເຈົ້າການຮັບຜິດຊອບໂດຍກົງ ແລະ ປະສານສົມທົບກັບພັນທະໜ້າທີ່ກ່ຽວຂ້ອງ ທັງພາກລັດ ແລະ ພາກເອກະຊົນ.

ອົງການຄຸ້ມຄອງວຽກງານການປະຢັດ ແລະ ອະນຸລັກພະລັງງານ ປະກອບດ້ວຍ:

- ກະຊວງພະລັງງານ ແລະ ບໍ່ແຮ່;
- ພະແນກພະລັງງານ ແລະ ບໍ່ແຮ່ປະຈຳແຂວງ, ນະຄອນຫຼວງ;
- ຫ້ອງການພະລັງງານ ແລະ ບໍ່ແຮ່ ເມືອງ;

2. ແຜນການຈັດຕັ້ງປະຕິບັດ:

ແຜນການຈັດຕັ້ງປະຕິບັດນະໂຍບາຍການປະຢັດ ແລະ ອະນຸລັກພະລັງງານສະບັບນີ້ ແບ່ງອອກເປັນສາມ ໄລຍະດັ່ງລຸ່ມນີ້:

- **ໄລຍະສັ້ນ (2015-2020):** ສ້າງນະໂຍບາຍແຫ່ງຊາດ ວ່າດ້ວຍການສົ່ງເສີມການປະຢັດ ແລະ ອະນຸລັກພະລັງງານ, ສ້າງດຳລັດນາຍົກລັດຖະມົນຕີ ວ່າດ້ວຍການສົ່ງເສີມການປະຢັດ ແລະ ອະນຸລັກພະລັງງານ, ສ້າງ ແລະ ຈັດຕັ້ງປະຕິບັດກົນໄກການປະສານສົມທົບໃນວຽກງານສົ່ງເສີມການປະຢັດ ແລະ ອະນຸລັກພະລັງງານ, ສ້າງແຜນງານສົ່ງເສີມການປະຢັດ ແລະ ອະນຸລັກພະລັງງານ; ສ້າງກົນໄກທາງດ້ານການເງິນເພື່ອສະໜັບສະໜຸນວຽກງານສົ່ງເສີມການປະຢັດ ແລະ ອະນຸລັກພະລັງງານ, ສ້າງຫຼັກການໃນການບໍລິການດ້ານພະລັງງານ, ສ້າງຖານຂໍ້ມູນການຊົມໃຊ້ພະລັງງານ, ສ້າງມາດຕະຖານດ້ານພະລັງງານ ເຊັ່ນ: ມາດຕະຖານສະມັດຕະພາບດ້ານພະລັງງານຕ່ຳສຸດ, ກາໝາຍການປະຢັດພະລັງງານ, ຂໍ້ກຳນົດດ້ານພະລັງງານ ຂອງພາກອຸດສາຫະກຳ, ທີ່ຢູ່ອາໄສ, ຕຶກ-ອາຄານທຸລະກິດ

ແລະ ສຳນັກງານ ແລະ ຂົນສົ່ງ; ສ້າງຂີດຄວາມສາມາດຂອງອົງກອນທີ່ຮັບຜິດຊອບ, ປູກຈິດສຳນຶກ ແລະ ດຳເນີນໂຄງການທົດລອງ-ຕົວແບບກ່ຽວກັບການປະຢັດ ແລະ ອານຸລັກພະລັງງານ.

- **ໄລຍະກາງ (2021-2025):** ຈັດຕັ້ງປະຕິບັດກົນໄກການປະສານສົມທົບໃນວຽກງານສົ່ງເສີມການປະຢັດ ແລະ ອານຸລັກພະລັງງານ, ປະກາດໃຊ້ກົນໄກທາງດ້ານການເງິນເພື່ອສະໜັບສະໜູນວຽກງານສົ່ງເສີມການປະຢັດ ແລະ ອານຸລັກພະລັງງານ, ສົ່ງເສີມ ການບໍລິການດ້ານພະລັງງານ, ປະກາດໃຊ້ມາດຕະຖານດ້ານພະລັງງານ ເຊັ່ນ: ມາດຕະຖານສະມັດຕະພາບດ້ານພະລັງງານຕ່ຳສຸດ, ການໝາຍການປະຢັດພະລັງງານ, ຂໍ້ກຳນົດດ້ານພະລັງງານຂອງພາກອຸດສາຫະກຳ, ທີ່ຢູ່ອາໄສ, ຕຶກ-ອາຄານທຸລະກິດ ແລະ ສຳນັກງານ ແລະ ຂົນສົ່ງ; ຂະຫຍາຍການດຳເນີນໂຄງການທົດລອງ-ຕົວແບບ ພ້ອມທັງສືບຕໍ່ພັດທະນາບຸກຄະລາກອນ ແລະ ປູກຈິດສຳນຶກກ່ຽວກັບການປະຢັດ ແລະ ອານຸລັກພະລັງງານ, ສ້າງລະບຽບກົດໝາຍ ກ່ຽວກັບການປະຢັດ ແລະ ອານຸລັກພະລັງງານ
- **ໄລຍະຍາວ (2026-2030):** ທົບທວນຄືນ ເພື່ອຖອດຖອນບົດຮຽນ ຈາກການຈັດຕັ້ງປະຕິບັດວຽກງານສົ່ງເສີມການປະຢັດ ແລະ ອານຸລັກພະລັງງານ ໃນໄລຍະຜ່ານມາ ເພື່ອ ພັດທະນາ/ປັບປຸງ ກົດໝາຍ, ລະບຽບ ແລະ ຂໍ້ກຳນົດຕ່າງໆ; ສືບຕໍ່ຈັດຕັ້ງປະຕິບັດບັນດາແຜນງານການປະຢັດ ແລະ ອານຸລັກພະລັງງານ, ສືບຕໍ່ປູກຈິດສຳນຶກ, ສົ່ງເສີມການລົງທຶນໃນກິດຈະການປະຢັດພະລັງງານ, ພັດທະນາການໃຫ້ບໍລິການພະລັງງານ ແລະ ພັດທະນາບຸກຄະລາກອນ ເພື່ອໃຫ້ແທດເໝາະກັບລະດັບການຂະຫຍາຍໂຕຂອງເສດຖະກິດ-ສັງຄົມໃນແຕ່ລະໄລຍະ.

3. ວິທີການຈັດຕັ້ງປະຕິບັດ

- ສ້າງນະໂຍບາຍ, ກົດໝາຍ, ລະບຽບການ, ແຜນຍຸດທະສາດ ແລະ ແຜນດຳເນີນງານ ກ່ຽວກັບການສົ່ງເສີມການປະຢັດ ແລະ ອານຸລັກພະລັງງານ, ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;
- ສ້າງຂີດຄວາມອາດສາມາດໃຫ້ບຸກຄະລາກອນທີ່ຮັບຜິດຊອບວຽກງານການປະຢັດ ແລະ ອານຸລັກພະລັງງານ;
- ສ້າງຂະບວນການປູກຈິດສຳນຶກ ກ່ຽວກັບການປະຢັດ ແລະ ອານຸລັກພະລັງງານ;
- ພັດທະນາຖານຂໍ້ມູນ ກ່ຽວກັບການປະຢັດ ແລະ ອານຸລັກພະລັງງານ;
- ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອຄຸ້ມຄອງການນຳເຂົ້າບັນດາອຸປະກອນເຄື່ອງໃຊ້ພະລັງງານ;
- ສຶກສາ, ຄົ້ນຄວ້າ ແລະ ດຳເນີນບັນດາໂຄງການສາທິດ ກ່ຽວກັບເຕັກໂນໂລຊີ ການປະຢັດ ແລະ ອານຸລັກພະລັງງານ;
- ເພີ່ມທະວີການຮ່ວມມືໃນລະດັບພາກພື້ນ ແລະ ສາກົນ ກ່ຽວກັບການປະຢັດ ແລະ ອານຸລັກພະລັງງານ;
- ສຶກສາ, ຄົ້ນຄວ້າ ແລະ ນຳໃຊ້ບົດຮຽນຂອງສາກົນໂດຍປັບໃຫ້ແທດເໝາະກັບເງື່ອນໄຂຕົວຈິງຂອງ ສປປ ລາວ.
- ນຳສະເໜີວຽກງານສົ່ງເສີມການປະຢັດ ແລະ ອານຸລັກພະລັງງານ ເພື່ອບັນຈຸເຂົ້າໃນແຜນພັດທະນາຂອງລັດຖະບານ;

ພາກທີ 4 ການຕິດຕາມ-ກວດກາການປະຕິບັດ

ມອບໃຫ້ກະຊວງພະລັງງານ ແລະ ບໍ່ແຮ່ ເປັນເຈົ້າການປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ໃນການຕິດຕາມ-ກວດກາ ການຈັດຕັ້ງປະຕິບັດນະໂຍບາຍສະບັບນີ້, ເພື່ອຮັບປະກັນ ແຜນງານ ແລະ ໂຄງການສົ່ງເສີມການປະຢັດ ແລະ ອານຸລັກພະລັງງານ ໃຫ້ຄ່ອງກັບບັນດາກົດໝາຍ, ນະໂຍບາຍ, ແຜນຍຸດທະສາດ ແລະ ແຜນດຳເນີນງານຕ່າງໆ ຂອງ ສປປ ລາວ.